# ກຳມະບານຮາກຖານ ທຄຕລ ຈັດພິທີ
# ມອບໃບຍ້ອງຍໍ ແລະ ໃບຊົມເຊີຍໃຫ້ສະມາຊິກຜູ້ທີ່ມີຜົນງານ




ເພື່ອເປັນການຍ້ອງຍໍຊົມເຊີຍສະມາຊິກກຳມະບານ ທຄຕລ ຜູ້ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຜັນຂະຫຍາຍ ຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ ແລະ ຜູ້ທີ່ມີຜົນງານໃນການປະກອບ ສ່ວນທຶນເຂົ້າໃນໂຄງການກໍ່ສ້າງໂຮງຮຽນ ບ້ານ ນ້ຳຍອນ, ເມືອງແມດ ແຂວງວັນຈັນ. ໃນຕອນເຊົ້າຂອງວັນທີ **26/09/2015** ທີ່ຜ່ານມາ ກຳມະບານຮາກຖານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີມອບໃບຍ້ອງຍໍ 2 ດີ 5 ເປັນເຈົ້າ ແລະ ໃບຊົມເຊີຍໃຫ້ແກ່ສະມາຊິກກຳມະບານຮາກຖານ ທຄຕລ ຂຶ້ນທີ່ ສະໂມສອນໃຫຍ່ຂອງສະຖາບັນການທະນາຄານ. ພິທີຄັ້ງນີ້ໃຫ້ກຽດເປັນປະທານກອງປະຊຸມ ໂດຍ **ທ່ານ ພູຊົງ ຈັນທະຈັກ** ຄະນະພັກທະນາຄານແຫ່ງ ສປປ ລາວ, ເລຂາຄະນະພັກຮາກຖານ ທຄຕລ, ຮັກສາການຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ພ້ອມດ້ວຍຄະນະກໍ່ໃຫ້ກຽດເຂົ້າຮ່ວມ ລວມທັງຄະນະພະແນກ, ຄະນະສາຂານະຄອນຫຼວງ ແລະ ສາຂາດົງໂດກ ພ້ອມດ້ວຍສະມາຊິກ 3 ອົງການຈັດຕັ້ງ ມະຫາຊົນ ກໍ່ໄດ້ພາກັນເຂົ້າຮ່ວມຢ່າງພ້ອມພຽງ.

ພິທີຄັ້ງນີ້ບັນດາສະມາຊິກໄດ້ຮັບຟັງການລາຍງານຈາກຄະນະບໍລິຫານງານກຳມະບານ ທຄຕລ ກ່ຽວກັບການເຄື່ອນໄຫວຂອງກຳມະບານຮາກຖານ ທຄຕລ ໄລຍະຜ່ານມາ ສາມາດສັງລວມໂດຍຫຍໍ້ດັ່ງນີ້: ສະມາຊິກທັງໝົດມີ 609 ສ/ຫ, ຍິງ 303 ສ/ຫ; ແບ່ງອອກເປັນ 42 ຈຸ ແລະ ໄດ້ລາຍງານຄວາມຄືບໜ້າຜົນສຳເລັດການເຄື່ອນໄຫວ 08 ເດືອນ ປະຈຳປີ 2015 ຕໍ່ພິທີກອງປະຊຸມຄັ້ງນີ້. ຄຽງຄູ່ກັນນັ້ນຄະ ນະບໍລິຫານງານກຳມະບານຮາກຖານ ກໍ່ໄດ້ຜ່ານເອກະສານຂໍ້ຕົກລົງຈຳນວນໜຶ່ງກ່ຽວກັບການຍ້ອງຍໍ ຊົມເຊີຍ. ການຍ້ອງຍໍ 2 ດີ 5 ເປັນເຈົ້າໃນຄັ້ງນີ້ມີ 02 ປະເພດຄື: ໃບຍ້ອງຍໍປະເພດ I ມີ **262** ສ/ຫ, ຍິງ 155 ສ/ຫ ແລະ ໃບຍ້ອງຍໍ ປະເພດ II ມີ **100** ສ/ຫ, ຍິງ 38 ສ/ຫ. ໃນນັ້ນ, ເພື່ອຕາງໜ້າໃຫ້ແຕ່ລະພາກສ່ວນຂຶ້ນຮັບການຍ້ອງຍໍແຕ່ລະປະເພດມີທັງໝົດ 30 ທ່ານ. ໃຫ້ກຽດມອບໃບຍ້ອງຍໍໂດຍ **ທ່ານ ພູຊົງ ຈັນທະຈັກ** ຄະນະພັກທະນາຄານແຫ່ງ ສປປ ລາວ, ເລຂາຄະນະພັກຮາກຖານ ທຄຕລ, ຮັກສາການຜູ້ອຳນວຍການໃຫຍ່ ທຄຕລ. ພ້ອມດຽວກັນນັ້ນໃນພິທີຍັງໄດ້ມອບໃບຊົມເຊີຍໃຫ້ແກ່ຜູ້ທີ່ໄດ້ປະກອບສ່ວນໃນການສ້າງຕັ້ງໂຮງຮຽນບ້ານນ້ຳຍອນ, ເມືອງແມດ, ແຂວງວຽງຈັນ ມີປະເພດກົມກອງ ລວມໝູ່ທັງໝົດ 28 ພາກສ່ວນ ແລະ ບຸກຄົນ 59 ທ່ານ.

ໃນຕອນທ້າຍຂອງພິທີ ບັນດາສະມາຊິກກຳມະບານຍັງໄດ້ຮັບຟັງການໂອ້ລົມຈາກ ທ່ານປະທານ, ເຊິ່ງທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ ຜົນງານໃນໄລຍະ 08 ເດືອນຜ່ານມາ ທີ່ກຳມະບານຮາກຖານ ທຄຕລ ຍາດມາໄດ້, ທ່ານໄດ້ສະແດງຄວາມຂອບໃຈຕໍ່ກັບຜູ້ທີ່ໄດ້ປະກອບສ້າງໂຮງຮຽນບ້ານນ້ຳຍອນ. ນອກນັ້ນ ທ່ານຍັງໄດ້ເນັ້ນໜັກຕໍ່ແຜນວຽກໃນຕໍ່ໜ້າ ໂດຍສະເພາະແມ່ນໃຫ້ເພີ່ມທະວີວຽກງານດ້ານການເມືອງແນວຄິດ, ນຳເອົາກົດລະບຽບກຳມະບານເຜີຍແຜ່ໃຫ້ແກ່ສະມາຊິກຮັບຊາບຢ່າງທົ່ວເຖິງ, ຮຽກຮ້ອງໃຫ້ສະມາຊິກແຕ່ລະຄົນມີຄວາມຕື່ນຕົວ, ມີສິນທຳປະຕິວັດ, ພັດທະນາຕົນເອງຮອບດ້ານ, ຮ່ຳຮຽນພາສາຕ່າງປະເທດ ແລະ ປັບຕົວກັບສະພາບການໂດຍສະເພາະໃນຍຸກ **AEC**. ນອກນັ້ນ, ທ່ານໄດ້ສະແດງຄວາມເປັນຫ່ວງເປັນໃຍມາຍັງ ຄະນະບໍລິຫານງານ ແລະ ສະມາຊິກທຸກຄົນຈົ່ງຮັກສາສຸຂະພາບຂອງຕົນເອງໃຫ້ມີສຸຂະພາບແຂງແຮງຢູ່ເລື້ອຍໆ ......

ໂດຍ: ສົມບຸນ ສຸລິວັນ



ຕາງໜ້າສະມາຊິກກຳມະບານ ຮັບໃບຍ້ອງຍໍ ປະເພດ I




ຕາງໜ້າສະມາຊິກກຳມະບານ ຮັບໃບຍ້ອງຍໍ ປະເພດ II



ສະມາຊິກຜູ້ທີ່ໄດ້ຮັບໃບຊົມເຊີຍ ໃນການປະກອບສ່ວນສ້າງໂຮງຮຽນບ້ານນ້ຳຍອນ, ເມືອງແມດ ແຂວງວຽງຈັນ
ຂັ້ນຄະນະພັກຮາກຖານ ທຄຕລ




ສະມາຊິກຜູ້ທີ່ໄດ້ຮັບໃບຊົມເຊີຍ ໃນການປະກອບສ່ວນສ້າງໂຮງຮຽນບ້ານນ້ຳຍອນ, ເມືອງແມດ ແຂວງວຽງຈັນ
ຂັ້ນກຳມະບານຮາກຖານ ທຄຕລ

